*Souphanouvong University Journal of Multidisciplinary Research and Development*
**2024,Vol. 8, No. 2, 158-165**
**https://doi.org/10.69692/SUJMRD0802158**

# A Study of the Lao Language Phonetic System of Villagers at Vangpa Village, Kaenthao District, Xayyabuly Province

**Sonesanith Bountavong*, Chay Oukhamla, khammonh Noyvongthong and Thayna Sisavhat**
*Lao Language – Literature Department, Faculty of Languages, Souphanouvong University, Lao PDR*

***Correspondence:***

*Sonesanith BOUNTAVONG*

*Lao Language – Literature Department, Faculty of Languages, Souphanouvong University*
*Tel: +8562029302099*
*Email:*
sonesanith2020@gmail.com

*Article Info:*
*Submitted: Feb 27, 2022*
*Revised: Jul 18, 2022*
*Accepted: Aug 01, 2022*

## Abstract

The purpose of this research was to study the consonant and vowel sound system of Villagers at Vangpa Village, Kaenthao District, Xayyabuly Province. The sample consisted of 15 villagers who are living inVangpa Village. The researcher analyzed data using theory of OnKeo NUANNAVONG.

The findings of this research were as follows:

Consonant sound of villagers at Vangpa Village consisted of 19 sound units such as: ກ /k/, ຂ-ຄ /kh/, ຫງ-ງ /ŋ/, ຈ /c/, ສ-ຊ /s/, ຫຍ-ຍ /ɲ/, ດ /d/, ຕ /t/, ຖ-ທ /th/, ໜ-ນ /n/, ບ /b/, ປ /p/, ຜ-ຟ /f/, ໝ-ມ /m/, ຢ /j/, ຫຼ-ລ /l/, ຫວ-ວ /w/, ອ /ʔ/, ຫ-ຮ /h/ of which 19 sound units are the first letter of the syllable and 8 units are the last letter of the syllable. There are 2 sound units out of official consonant sound such as ຜ -ພ /ph/ because of villagers at Vangpa Village produce sound ຖ -ທ /th/. And villagers are not produce complex consonant sound of “ວ”.

Vowel sound of villagers at Vangpa Village consisted of 22 sound units.

- Common vowels are 18 sound unit such as xະ /a/, xາ /a:/, xິ /i/, xີ /i:/, xຶ /ɯ/, xື /ɯ:/, xຸ /u/, xູ /u:/, ເxະ /e/, ເx /e:/, ແxະ /ɛ/, ແx /ɛ:/, ໂxະ /o/, ໂx /o:/, ເxາະ /ɔ/, xໍ /ɔ:/, ເອິ /ə/, ເອີ /ə:/.
- Diphthong sound of Villagers at vangpa village consisted of 4 sound units as ເອັຍ /ia/, ເອຍ /i: a/, ອົວະ /ua/, ອົວ /u: a/. There are not 2 sound units of official language as ເxຶອ /ɯ a/, ເxືອ /:a/ because of Vangpa’s villagers produce sound of ເxັຍ /ia/, ເxຍ /i:a/.
- There are 3 special vowels of Vangpa’s villagers which are ໄx /aj/, ເxົາ/aw/, xໍາ /am/. Vangppa’s villagers are not able to produce the sound ໃx. Instead, they produce sound ໄx.

**Key words:** *Lao language phonetic system, sound units*

## 1. ພາກສະເໜີ

ສາທາລະນະລັດປະຊາທິປະໄຕ ປະຊາຊົນລາວເປັນປະເທດໜຶ່ງທີ່ມີຫຼາຍຊົນເຜົ່າດຳລົງຊີວິດຢູ່ຮ່ວມກັນອັນໄດ້ເປັນປະກອບເປັນວິງສາຄະນາຍາດແຫ່ງຊາດ. ອີງຕາມມະຕິຂອງກອງປະຊຸມສະພາແຫ່ງຊາດ, ສະບັບເລກທີ 108/ສພຊ, ລົງວັນທີ 5 ທັນວາ 2018 ; ມາດຕາ 2 ໄດ້ຮັບຮອງຈຳນວນຊົນເຜົ່າໃນສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ຈາກ 49 ຊົນເຜົ່າ ມາເປັນ 50 ຊົນເຜົ່າ ໂດຍໄດ້ຮັບຮອງເພີ່ມຕື່ມ 1 ຊົນເຜົ່າຄື ຊົນເຜົ່າບຣູ ຈັດຢູ່ໃນໝວດພາສາມອນ-ຂະແມ. ໃນບັນດາ 50 ຊົນເຜົ່າຄືດັ່ງກ່າວນັ້ນໄດ້ຈັດອອກເປັນ 4 ໝວດໃຫຍ່ ໂດຍອີງໃສ່ພາສາປາກເວົ້າ, ວັດທະນະທຳ ແລະ ຮີດຄອງປະເພນີທີ່ຄ້າຍຄືກັນ ມີຄື (1) ໝວດພາສາລາວ-ໄຕ, (2) ໝວດພາສາມອນ-ຂະແມ, (3) ໝວດພາສາຈີນ-ຕິເບດ, (4) ໝວດພາສາມົ້ງ-ຢ້າວ ເຊິ່ງແຕ່ລະໝວດພາສາເຫຼົ່ານີ້ກໍມີຫຼາຍຊົນເຜົ່າຍ່ອຍປະກອບຢູ່ນຳ.

ບັນດາເຜົ່າລາວ - ໄຕ ໄດ້ເຂົ້າມາຢູ່ດິນແດນລາວນີ້ແຕ່ເຫິງນານມາແລ້ວ, ໃນໄລຍະຜ່ານພວກເຮົາເຄີຍເອີ້ນວ່າ: “ລາວລຸ່ມ” ປັດຈຸບັນໝວດພາສາລາວ - ໄຕ ປະກອບດ້ວຍ 8 ຊົນເຜົ່າເຊັ່ນ ເຜົ່າລາວ, ເຜົ່າຜູ້ໄທ, ເຜົ່າໄຕ, ເຜົ່າລື້, ເຜົ່າຍວນ, ເຜົ່າຢັ້ງ, ເຜົ່າແຊກ ແລະ ເຜົ່າໄທເໜືອ. ບັນດາເຜົ່າທີ່ກ່າວມານັ້ນ ລ້ວນແຕ່ມີພາສາປາກເວົ້າ, ສິລະປະວັດທະນະທຳ, ຄວາມເຊື່ອຖື ແລະ ຮີດຄອງປະເພນີທີ່ແຕກຕ່າງກັນເປັນຕົ້ນແມ່ນລະບົບສຽງຂອງພາສາ; ສຽງໃນພາສາລາວແບ່ງອອກເປັນ 3 ຈຳພວກຄື ສຽງສະຫຼະ, ສຽງພະຍັນຊະນະ ແລະ ສຽງວັນນະຍຸດ.

### ກ. ສຽງສະຫຼະ

ສຽງສະຫຼະ ແມ່ນສຽງທີ່ເປັ່ງອອກມາທາງປາກ ໂດຍທີ່ບໍ່ມີອະໄວຍະວະສ່ວນໃດໃນປາກມາອັດຕັນທາງລົມໄວ້, ແຕ່ອະໄວຍະວະໃນປາກອາດຢູ່ໃນລັກສະນະ ແລະ ຕຳແໜ່ງທີ່ເຮັດໃຫ້ຜົ້ງປາກມີລັກສະນະຕ່າງໆກັນໄດ້ຫຼາຍແບບ. ລົມທີ່ຜ່ານອອກມາຈິ່ງເກີດເປັນສຽງຕ່າງກັນ. ສຽງສະຫຼະໃນພາສາລາວ ມີ 24 ສຽງ; ເປັນສຽງສະຫຼະເຄົ້າ 18 ສຽງ ຄື: xະ /a/, xາ /a:/, xິ /i/, xີ/i:/, xຶ /ɯ/, xື /ɯ:/ xຸ /u/, xູ /u:/, ເxະ /e/, ເx /e:/, ແxະ /ɛ/, ແx /ɛ:/, ເxາະ /ɔ/, xໍ /ɔ:/, ໂxະ /o/, ໂx /o:/, ເxິ /ə/, ເxີ /ə:/ ແລະ ສຽງສະຫຼະປະສົມ 6 ສຽງຄື ເxັຍ /ia/, ເxຍ /i:a/, ເxຶອ /ɯa/, ເxືອ /ɯ:a/, xົວະ /ua/, xົວ /u:a/.

**ສ່ວນ ໄອ, ເອົາ, ອຳ ເປັນສຽງສະຫຼະປະສົມກັບສຽງພະຍັນຊະນະທ້າຍພະຍາງ (ຕົວສະກົດ) ດັ່ງນີ້:**

| | | | | |
|---|---|---|---|---|
| ໃx ໄx/aj/ | ເກີດຈາກສຽງສະຫຼະ | xະ/a/ | ປະສົມກັບ | ຍ /j/ |
| ເxົາ/aw/ | ເກີດຈາກສຽງສະຫຼະ | xະ /a/ | ປະສົມກັບ | ວ /w/ |
| Xໍາ/am/ | ເກີດຈາກxສຽງສະຫຼະ | xະ/a/ | ປະສົມກັບ | ມ /m/ |

### ຂ. ສຽງພະຍັນຊະນະ

ສຽງພະຍັນຊະນະແມ່ນສຽງທີ່ເກີດຈາກລົມ ໂດຍຜ່ານເສັ້ນສຽງແລ້ວຖືກດັດແປງດ້ວຍອະໄວຍະວະອອກສຽງສ່ວນຕ່າງໆໃນປາກ. ສຽງພະຍັນຊະນະມີຫຼາຍປະເພດ, ມີລັກສະນະການອອກສຽງທີ່ແຕກຕ່າງກັນຫຼາຍແບບ ຄວາມແຕກຕ່າງຂອງສຽງມີຄວາມສຳຄັນໃນການເຮັດໃຫ້ຄວາມໝາຍຂອງຄຳ ຫຼື ພະຍາງໃນພາສາຕ່າງກັນ. ພະຍັນຊະນະໃນພາສາລາວມີ 33 ຕົວ ແຕ່ຖ້າບໍ່ແຍກເປັນສຽງອັກສູນສູງ ອັກສອນຕ່ຳແລ້ວ ຈະມີພຽງ 20 ສຽງເທົ່ານັ້ນ ຄື: ສຽງ ກ /k/ (ເກີ), ຂ-ຄ /kh/ (ເຄີ), ຫງ-ງ /ŋ/ (ເງີ), [ຈ] /c/ (ເຈີ), ສ-ຊ /s/ (ເຊີ), ຫຍ-ຍ/ɲ/ (ເຍີ), ດ /d/ (ເດີ), ຕ /t/ (ເຕີ), ຖ-ທ /th/ (ເທີ), ໜ-ນ /n/ (ເນີ), ບ /b/ (ເບີ), ປ /p/ (ເປີ), ຜ- ພ /ph/ (ເພີ), ຝ-ຟ /f/ (ເຟີ), ໝ-ມ /m/ (ເມີ), ຢ /j/ (ເຢີ), ຫຼ-ລ-ຣ /l/ (ເລີ), ຫວ-ວ /w/ (ເວີ), ອ /ʔ/ (ເອີ), ຫ-ຮ /h/ (ເຮີ).

### ຄ. ສຽງວັນນະຍຸດ

ສຽງວັນນະຍຸດ ແມ່ນສຽງທີ່ເປັ່ງອອກມາແລ້ວມີລະດັບສູງ-ຕ່ຳ; ພາສາລາວທ້ອງຖິ່ນຕ່າງໆ ມີສຽງວັນ ນະຍຸດແຕກຕ່າງກັນໄປຕາມແຕ່ລະເຂດ, ໃນພາສາລາວທ້ອງຖິ່ນນະຄອນຫຼວງວຽງຈັນ ມີ 6 ສຽງ ແລະ ແບ່ງເປັນ 2 ໝວດຄື (1) ໝວດສຽງວັນນະຍຸດລະດັບສະເໝີ ມີ 3 ສຽງ: ສຽງວັນນະຍຸດຕ່ຳສະເໝີ, ສຽງວັນນະຍຸດລະດັບກາງສະເໝີ ແລະ ສຽງວັນນະຍຸດລະດັບສູງສະເໝີ; (2) ສຽງວັນນະຍຸດປ່ຽນລະດັບ ມີ 3 ສຽງ ຄື: ສຽງວັນນະຍຸດປ່ຽນຕ່ຳຂຶ້ນ, ສຽງວັນນະຍຸດປ່ຽນສູງລົງຕ່ຳ ແລະ ສຽງວັນນະຍຸດປ່ຽນກາງລົງຕ່ຳ.

ຜ່ານມາໄດ້ມີຜູ້ສຶກສາຄົ້ນຄວ້າກ່ຽວກັບລະບົບສຽງຂອງພາສາລາວໄຕ ໃນຫຼາຍທ້ອງຖິ່ນ ແລະ ຫຼາຍແງ່ ມູມແຕກຕ່າງກັນ ເຊັ່ນ:

ທອງພັນ ພິມພິບົດ (2012) ໄດ້ສຶກສາສົມທຽບພາສາທ້ອງຖິ່ນແກ່ນທ້າວ ເມືອງແກ່ນທ້າວ ແຂວງໄຊຍະບູລີ ກັບ ພາສາທ້ອງຖິ່ນວຽງຈັນ ໂດຍມີຈຸດປະສົງເພື່ອສຶກສາສົມທຽບພາສາທ້ອງຖິ່ນແກ່ນທ້າວກັບພາສາທ້ອງຖິ່ນວຽງຈັນ. ຜົນການສຶກສາເຫັນວ່າ ຈຳນວນໜ່ວຍສຽງພະຍັນຊະນະ, ສະຫຼະ ແລະ ສຽງວັນນະຍຸດລະ ຫວ່າງທ້ອງຖິ່ນວຽງຈັນກັບທ້ອງຖິ່ນແກ່ນທ້າວແມ່ນບໍ່ເທົ່າກັນ ໜ່ວຍສຽງພະຍັນ ຊະນະທ້ອງຖິ່ນວຽງຈັນມີ 20 ໜ່ວຍສຽງ, ໜ່ວຍສຽງພະຍັນຊະນະທ້ອງຖິ່ນແກ່ນທ້າວມີ 19 ໜ່ວຍສຽງ ແລະ ໜ່ວຍສຽງສະຫຼະທ້ອງຖິ່ນວຽງຈັນມີ 18 ໜ່ວຍສຽງ, ສະຫຼະປະສົມທ້ອງຖິ່ນວຽງຈັນ 3 ໜ່ວຍສຽງເຊັ່ນ: ເxັຍ /ia/, xົວະ /ua/, ເxືອ /ɯa/. ໜ່ວຍສຽງສະຫຼະທ້ອງຖິ່ນແກ່ນທ້າວມີ 18 ໜ່ວຍສຽງ ສ່ວນສະຫຼະປະສົມທ້ອງຖິ່ນແກ່ນທ້າວມີພຽງ 2 ໜ່ວຍສຽງຄື: ເxັຍ /ia/, xົວະ /ua/. ສ່ວນສະຫຼະ ເxືອ /ɯa/ ທ້ອງຖິ່ນແກ່ນທ້າວແມ່ນບໍ່ມີ.

ສີວະພອນ ຮາຊົນນາຮີ (2543) ໄດ້ສຶກສາລະບົບສຽງໃນພາສາຫຼວງພະບາງ: ສຶກສາປຽບທຽບກັບພາສາລາວຄັ່ງລຸ່ມນໍ້າທ່າຈີນ ແລະ ພາສາລາວດ່ານຊ້າຍ ເຊິ່ງມີຈຸດປະສົງ ເພື່ອສຶກສາວິເຄາະລະບົບສຽງພາສາລາວຫຼວງພະບາງ ທີ່ບ້ານປາກເຊືອງ ເມືອງຫຼວງພະບາງ ແຂວງຫຼວງພະບາງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ປຽບທຽບກັບ ລະບົບສຽງພາສາລາວດ່ານຊ້າຍ ແຂວງເລີຍ ແລະ ພາສາລາວຄັ່ງລຸ່ມນໍ້າທ່າຈີນ. ຜົນວິໄຈປາກົດວ່າ ພາສາຫຼວງພະບາງ, ພາສາລາວດ່ານຊ້າຍ ແຂວງເລີຍ ແລະ ພາສາລາວຄັ່ງລຸ່ມນໍ້າທ່າຈີນ ປະກອບດ້ວຍໜ່ວຍສຽງພະຍັນຊະນະຕົ້ນດ່ຽວ ມີຈຳນວນ 20 ໜ່ວຍສຽງເທົ່າກັນ, ເປັນພະຍັນຊະນະທ້າຍພະຍາງ 9 ໜ່ວຍສຽງ; ມີໜ່ວຍສຽງສະຫຼະຈຳນວນ 21 ໜ່ວຍສຽງເທົ່າກັນ, ເປັນໜ່ວຍສຽງສະຫຼະດ່ຽວ 18 ໜ່ວຍສຽງ ແລະ ໜ່ວຍສຽງສະຫຼະປະສົມ 3 ໜ່ວຍສຽງ ແລະ ມີຈຳນວນໜ່ວຍສຽງວັນນະຍຸດ 5 ໜ່ວຍສຽງເທົ່າກັນ.

ເພັນປະພາ ຈຸມມາລີ (2553) ໄດ້ສຶກສາລະບົບສຽງພາສາຜູ້ໄທ ເຂດຖໍ້າຈະເລີນ ເມືອງໂຊ່ພິໄສ ແຂວງບຶງການ ປະເທດໄທ ໂດຍມີຈຸດປະສົງ ເພື່ອສຶກສາລະບົບສຽງພາສາຜູ້ໄທ. ຜົນການວິໄຈພົບວ່າ ພາສາຜູ້ໄທ ເຂດຖໍ້າຈະເລີນ ເມືອງໂຊ່ພິໄສ ແຂວງບຶງການ ມີໜ່ວຍສຽງພະຍັນຊະນະຕົ້ນດ່ຽວ 20 ໜ່ວຍສຽງ, ໜ່ວຍສຽງພະຍັນຊະນະຕົ້ນຄວບ 2 ໜ່ວຍສຽງ, ປາກົດເປັນໜ່ວຍສຽງພະຍັນຊະນະທ້າຍພະຍາງ 9 ໜ່ວຍສຽງ; ໜ່ວຍສຽງສະຫຼະ 18 ສະຫຼະ ບໍ່ມີໜ່ວຍສຽງສະຫຼະປະສົມ ແລະ ມີໜ່ວຍສຽງວັນນະຍຸດ 5 ໜ່ວຍສຽງ ມີການແຕກຕົວຂອງວັນນະຍຸດອອກເປັນ 2 ທາງ.

ເໜືອນຝັນ ພູ່ພັນ (2560) ໄດ້ສຶກສາລະບົບສຽງ ແລະການຜັນແປຂອງສຽງວັນນະຍຸດໃນພາສາລາວ ບ້ານສິບຄຳ ເຂດວຽງ ເມືອງຊຽງແສນ ຈັແຂວງຊຽງລາຍ ປະເທດໄທ ໂດຍມີຈຸດປະສົງ ເພື່ອສຶກສາລະບົບສຽງ ແລະ ການຜັນແປຂອງສຽງວັນນະຍຸດໃນພາສາລາວ ບ້ານສິບຄຳ ເຂດວຽງ ເມືອງຊຽງແສນ ແຂວງຊຽງລາຍ ປະເທດໄທ ໃນຄົນສອງລະດັບອາຍຸ. ຜົນການສຶກສາພົບວ່າ ພາສາລາວ ບ້ານສິບຄຳ ເຂດວຽງ ເມືອງຊຽງແສນ ແຂວງຊຽງລາຍ ມີໜ່ວຍສຽງພະຍັນຊະນະຕົ້ນດ່ຽວ 20 ໜ່ວຍສຽງ, ໜ່ວຍສຽງພະຍັນຊະ ນະທ້າຍ 9 ໜ່ວຍສຽງ, ໜ່ວຍສຽງພະຍັນຊະນະຄວບ 2 ໜ່ວຍສຽງ; ມີໜ່ວຍສຽງສະຫຼະດ່ຽວ 18 ໜ່ວຍສຽງ, ໜ່ວຍສຽງສະຫຼະປະສົມ 4 ໜ່ວຍສຽງ ແລະ ໜ່ວຍສຽງວັນນະຍຸດ 5 ໜ່ວຍສຽງ. ນອກນັ້ນ, ຜູ້ສຶກສາຍັງສະຫຼຸບວ່າ ພາສາລາວ ບ້ານສິບຄຳ ມີລັກສະນະສຽງວັນນະຍຸດຄ້າຍຄືກັບລັກສະນະສຽງວັນນະຍຸດຂອງພາສາລາວຫຼວງພະບາງ ສະນັ້ນ, ຈຶ່ງເວົ້າໄດ້ວ່າ ພາສາລາວ ບ້ານສິບຄຳ ອາດຈະແມ່ນພາສາລາວກຸ່ມດຽວກັນກັບ ພາສາລາວກຸ່ມຫຼວງພະບາງ.

ແສງຟ້າ ໂທລານຸພາບ (2018) ໄດ້ສຶກສາສຽງໃນພາສາລາວ ໂດຍມີຈຸດປະສົງວິເຄາະລະບົບສຽງໃນພາສາລາວ. ຜົນການສຶກສາພົບວ່າ ພາສາລາວມີ ສຽງສະຫຼະ 24 ສຽງ, ເປັນສຽງສະຫຼະເດົ່າ 18 ສຽງ ແລະ ສຽງສະຫຼະປະສົມ 6 ສຽງ; ມີສຽງພະຍັນຊະນະ 20 ສຽງ ແລະ ສຽງວັນນະຍຸດ 6 ສຽງ.

ນົງລັກ ສູງສຸມານ (2019) ໄດ້ສຶກສາລະບົບສຽງພາສາໄທຄັງ ເມືອງວຽງທອງ ແຂວງບໍລິຄຳໄຊ ໂດຍມີຈຸດປະສົງສຶກສາຄົ້ນຄວ້າລະບົບສຽງຂອງເຜົ່າໄທຄັງ ເມືອງວຽງທອງ ແຂວງບໍລິຄຳໄຊ. ຜົນການຄົ້ນຄວ້າພົບວ່າ ພາສາໄທຄັງ ມີຈຳນວນໜ່ວຍສຽງພະຍັນຊະນະ 19 ໜ່ວຍສຽງ, ໜ່ວຍສຽງສະຫຼະ 20 ໜ່ວຍສຽງ ແລະໜ່ວຍສຽງ

ວັນນະຍຸດ 6 ໜ່ວຍສຽງ; ພາສາໄທຄັ່ງມີການກາຍສຽງພະຍັນຊະນະດັ້ງເດີມຢູ່ໃນກຸ່ມ **ພ (PH group)** ແລະ ການແຕກຕົວຂອງສຽງວັນນະຍຸດເປັນ 3 ທາງ ແລະ ຈັດຢູ່ໃນກຸ່ມພາສາລາວ.

ຈາກຜົນການສຶກສາຄົ້ນຄວ້າຂອງບັນດານັກວິຊາການຫຼາຍໆທ່ານດັ່ງທີ່ກ່າວມານັ້ນ ຄະນະຜູ້ສຶກສາຈຶ່ງໄດ້ມີຄວາມສົນໃຈໃນການເລືອກສຶກສາລະບົບສຽງຂອງພາສາຖິ່ນ ບ້ານວັງປາ ເມືອງແກ່ນທ້າວ ແຂວງໄຊຍະບູລີ. ໂດຍມີຈຸດປະສົງເພື່ອສຶກສາລະບົບສຽງພະຍັນຊະນະ ແລະ ສຽງສະຫຼະຂອງພາສາທ້ອງຖິ່ນດັ່ງກ່າວ ເນື່ອງຈາກວ່າສະພາບສັງຄົມນັບມື້ນັບມີການຂະຫຍາຍຕົວ ຈະສົ່ງຜົນໃຫ້ພາສາມີການປ່ຽນແປງໄປນຳ ຫາກບໍ່ມີການສຶກສາຄົ້ນຄວ້າ ຫຼື ການຈົດບັນທຶກໄວ້ເປັນລາຍລັກອັກສອນອາດເຮັດໃຫ້ສຽງພາສາຂອງທ້ອງຖິ່ນມີການປ່ຽນແປງໄປ ແລະ ຄົນຮຸ່ນໃໝ່ກໍຈະບໍ່ຮັບຮູ້ສຽງດັ້ງເດີມຂອງພາສາໃນທ້ອງຖິ່ນຕົນເອງ. ການສຶກສາຄັ້ງນີ້ມີຄວາມສຳຄັນຕໍ່ຜູ້ສຶກສາຄົ້ນຄວ້າ ແລະ ເພື່ອໃຫ້ຄົນໃນທ້ອງຖິ່ນອື່ນສາມາດຮັບຮູ້ກ່ຽວພາສາຖິ່ນບ້ານວັງປາຫຼາຍຂຶ້ນກວ່າເກົ່າ ທັງຈະກາຍເປັນຂໍ້ມູນໃຫ້ແກ່ຜູ້ທີ່ມີຄວາມສົນໃຈຢາກຈະສຶກສາຄົ້ນຄວ້າຕໍ່, ສິ່ງສຳຄັນອີກຢ່າງໜຶ່ງກໍເພື່ອເຮັດໃຫ້ຄົນໜຸ່ມນ້ອຍໃຫ້ຮູ້ຈັກພາສາຖິ່ນຫຼາຍຂຶ້ນ, ມີຄວາມພາກພູມໃຈໃນພາສາຖິ່ນຂອງຕົນເອງ, ພ້ອມກັນປົກປັກຮັກສາໄວ້ໃຫ້ຄົງຢູ່ຄູ່ກັບຄົນໃນທ້ອງຖິ່ນກໍຄືຢູ່ຄູ່ກັບຊາດລາວຕະຫຼອດໄປ.

## 2. ອຸປະກອນ ແລະ ວິທີການ

### 2.1. ການຮິບໂຮມຂໍ້ມູນ

ການຮິບໂຮມຂໍ້ມູນໃນການສຶກສາຄັ້ງນີ້ຜູ້ສຶກສາໄດ້ການເກັບກຳຂໍ້ມູນໂດຍແຍກເປັນ 2ພາກສ່ວນ ດັ່ງນີ້:

1) ຮິບໂຮມບັນດາແນວຄິດທິດສະດີ ແລະ ບົດຄົ້ນຄວ້າທີ່ກ່ຽວຂ້ອງກັບພາສາໜ້າຈາກແຫຼ່ງຂໍ້ມູນຕ່າງໆເຊັ່ນ ເອກະສານປະກອບການຮຽນ, ວິທະຍານິພົນ, ຈາກບັນດາບົດຄວາມວິຊາການອື່ນໆ.

2) ຕາຕະລາງຄຳສັບໃຊ້ເພື່ອເກັບລະບົບສຽງ (ຄັດເລືອກຈາກ fang kuei li (1977) ແລະ Matisoff (2000) ຄັດເລືອກຕາມລຳດັບໜ່ວຍສຽງພະຍັນຊະນະ ກ-ຮ ເພື່ອເກັບກຳຂໍ້ມູນກ່ຽວກັບພະ ຍັນຊະນະຈຳນວນ 200 ຄຳສັບ, ຄັດເລືອກຕາມລຳດັບໜ່ວຍສຽງສະຫຼະ xະ - xໍາ ຈຳນວນ 112 ຄຳສັບ.

3)ການເກັບກຳຂໍ້ມູນພາກສະໜາມ ຄະນະຜູ້ສຶກສາໄດ້ດຳເນີນໄປຕາມຂັ້ນຕອນຢ່າງເປັນລະບົບຄື:

(1)ສ້າງແບບສຳພາດເພື່ອເກັບຂໍ້ມູນ.

(2) ຂຽນໜັງສືສະເໜີເພື່ອຂໍອະນຸຍາດຜ່ານນາຍບ້ານແລ້ວລົງເກັບກຳຂໍ້ມູນນຳກຸ່ມຕົວຢ່າງ; ສຳລັບກຸ່ມຕົວຢ່າງທີ່ໃຊ້ໃນການວິໄຈໃນຄັ້ງນີ້ມີຈຳນວນ 15 ຄົນ ເຊິ່ງການົດເງື່ອນໄຂ ດັ່ງນີ້:

- ອາຍຸ 50 ປີ ຂຶ້ນໄປ
- ເປັນຜູ້ທີ່ມີອະໄວຍະວະການອອກສຽງຄົບຖ້ວນສົມບູນ, ອອກສຽງຈະແຈ້ງ ຊັດເຈນ.
- ເປັນຜູ້ທີ່ເວົ້າພາສາລາວຖິ່ນໃນຊີວິດປະຈຳວັນ
- ເປັນຄົນພື້ນຖານ ບ້ານວັງປາ ມາແຕ່ກຳເນີດ ແລະ ບໍ່ເຄີຍຍ້າຍໄປຢູ່ຖິ່ນອື່ນ.
- ຕ້ອງແມ່ນຊົນເຜົ່າລາວ ແລະ ເປັນຜູ້ທີ່ເຕັມໃຈໃຫ້ຂໍ້ມູນ.

### 2.2. ການວິເຄາະຂໍ້ມູນ

ຫຼັງຈາກຜູ້ສຶກສາໄດ້ເລືອກຂໍ້ມູນທີ່ໄດ້ຈາກການສຳພາດເອົາຕົວຈິງທີ່ບ້ານ ວັງປາ ເມືອງແກ່ນທ້າວ ແຂວງໄຊຍະບູລີ ມາວິເຄາະສຽງພະຍັນຊະນະ ແລະ ສຽງສະຫຼະ ໂດຍອີງໃສ່ທິດສະດີຂອງອ່ອນແກ້ວ ນວນນະວົງ (2020) ດັ່ງນີ້:

\+ ວິເຄາະສຽງພະຍັນຊະນະອີງໃສ່ທິດສະດີສຽງພະຍັນຊະນະໃນພາສາລາວມີ 20 ສຽງຄື ກ /k/, ຂ-ຄ /kh/, ຫງ-ງ /ŋ/, ຈ /c/, ສ-ຊ /s/, ຫຍ-ຍ /ɲ/, ດ /d/, ຕ /t/, ຖ-ທ /th/, ໜ-ນ /n/, ບ /b/, ປ /p/, ຜ-ພ /ph/, ຝ-ຟ /f/, ໝ-ມ /m/, ຢ /j/, ຫຼ-ລ-ຣ /l/, ຫວ-ວ /w/, ອ /ʔ/, ຫ, ຮ /h/.

\+ ວິເຄາະສຽງສະຫຼະອີງໃສ່ທິດສະດີສຽງສະຫຼະໃນພາສາລາວມີ 24 ສຽງ ເປັນສຽງສະຫຼະເດົ່າ 18 ສຽງ ຄື xະ /a/, xາ /aː/, xິ /i/, xີ /iː/, xຶ /ɯ/, xື /ɯː/, xຸ /u/, xູ /uː/, ເxະ /e/, ເx /eː/, ແxະ /ɛ/, ແx /ɛː/, ໂxະ /o/, ໂx /oː/, ເxາະ /ɔ/, xໍ /ɔː/, ເອິ /ə/, ເອີ /əː/ ແລະ ສະຫຼະປະສົມ 6 ສຽງຄື: ເxັຍ /ia/, ເxຍ /iːa/, ເxຶອ /ɯa/, ເxືອ /ɯːa/, xົວະ /ua/, xົວ /uːa/.

## 3. ຜົນໄດ້ຮັບ

### 3.1. ລະບົບສຽງພະຍັນຊະນະຂອງພາສາລາວຖິ່ນບ້ານວັງປາ

ພາສາຖິ່ນບ້ານວັງປາ ເມືອງແກ່ນທ້າວ ແຂວງໄຊຍະບູລີ ລວມມີໜ່ວຍສຽງພະຍັນຊະນະທັງໝົດ 19 ໜ່ວຍສຽງ ເຊິ່ງສາມາດຈຳແນກ ດັ່ງນີ້:

- ເປັນພະຍັນຊະນະຕົ້ນ ໄດ້ທັງໝົດຄື:

(1) **ກ ໄດ້ແກ່ສຽງ /k/ (ເກົ)** : ກະທິ [ ka ]$^{1}$ [ thi ]$^{3}$, ກຳທ້າ (ກຳພ້າ) [ kam ]$^{1}$ [ tha: ]$^{5}$

(2) **ຂ ຄ ໄດ້ແກ່ສຽງ /kh/ (ເຄົ)**: ຄານ [ kha:n ]$^{3}$, ຂີ້ເຝ້ຍ (ຂີ້ເຝື້ອ)[ khi: ]$^{6}$ [ fi:a ]$^{4}$

(3) **ຫງ ງ ໄດ້ແກ່ສຽງ /ŋ/ (ເງົ)** : ເງິນ [ ŋən ]$^{3}$, ງູ [ŋu:]$^{3}$

(4) **ຈ ໄດ້ແກ່ສຽງ /c/ (ເຈົ)** : ຈັກຕອກ [ cak ]$^{7}$ [ tɔ:k ]$^{6}$, ຈາງເກຍ (ຈາງເກືອ) [ ca:ŋ ]$^{1}$[ ki:a ]$^{1}$

(5) **ສ ຊ ໄດ້ແກ່ສຽງ /s/ (ເຊົ)** : ເສືອ (ເສຍ$^{4}$) [ si:a ], ຊື້ [ sɯ:a ]$^{5}$

(6) **ຫຍ ຍ ໄດ້ແກ່ສຽງ /ɲ/(ເຍົ)** : ຍາມ [ ɲa:m ]$^{3}$, ຍ່າງ [ ɲa:ŋ]$^{2}$

(7) **ດ ໄດ້ແກ່ສຽງ /d/ (ເດົ)** : ໄດ້ຍິນ [ dai ]$^{5}$ [ ɲin ]$^{3}$, ດິນ [ din ]$^{1}$

(8) **ຕ ໄດ້ແກ່ສຽງ /t/ (ເຕົ)** : ຕາກ [ ta:k ]$^{6}$, ຕົ່ນ [ tɯ:a ]$^{2}$

(9) **ຖ ທ ໄດ້ແກ່ສຽງ /th/(ເທົ)**: ຖ່ານ [ tha:n ]$^{2}$, ຫ້ອງ [ thɔ:ŋ ]$^{5}$

(10) **ໜ ນ ໄດ້ແກ່ສຽງ /n/ (ເນົ)** : ໜັງ [ naŋ ]$^{4}$, ນາຍຄູ [ na:i ]$^{3}$ [ khu: ]$^{3}$

(11) **ບ ໄດ້ແກ່ສຽງ /b/ (ເບົ)** : ບີແຄ່ງ [ bi: ]$^{1}$ [ khɛ:ŋ ]$^{2}$, ເບຍ [ bi:a ]$^{1}$

(12) **ປ ໄດ້ແກ່ສຽງ/p/ (ເປົ)** : ປ້າ [ pa: ]$^{5}$, ເປົ່າ [ paw ]$^{2}$

(13) **ຝ ຟ ໄດ້ແກ່ສຽງ /f/** : ຝ້າຍ [ fa:i ]$^{6}$, ຟັນໄມ້ [ fan ]$^{3}$ [ mai ]$^{2}$

(14) **ໝ ມ ໄດ້ແກ່ສຽງ /m/ (ເມົ)** : ມັນຕົ້ນ [ man ]$^{3}$ [ ton ]$^{5}$, ໝາກຖົ່ວ[ ma:k ]$^{6}$[ thu:a ]$^{2}$

(15) **ຢ ໄດ້ແກ່ສຽງ /j/ (ເຢົ)** : ຢາງ [ jaŋ ]$^{1}$, ຢັນ [ jan ]$^{1}$

(16) **ຫຼ ລ ຣ ໄດ້ແກ່ສຽງ /l/ (ເລົ)** : ແລ່ນ [ lɛ:n ]$^{2}$, ເຫຼືອ [ lɯ:a ]$^{4}$

(17) **ຫວ ວ ໄດ້ແກ່ສຽງ /w/(ເວົ)**: ຫວານ [ wa:n ]$^{4}$, ວ່າງ [ wa:ŋ ]$^{2}$

(18) **ອ ໄດ້ແກ່ສຽງ /ʔ/ (ເອົ)** : ອ້າຍ [ ʔa:i ]$^{5}$, ອາວ [ ʔa:o ]$^{1}$

(19) **ຫ ຮ ໄດ້ແກ່ສຽງ /h/ (ເຮົ)** : ຮ້ອນ [ hɔ:n ]$^{5}$, ຫາດ [ ha:t ]$^{6}$

ເມື່ອທຽບກັບສຽງພະຍັນຊະນະພາສາກາງເຫັນວ່າ ພາສາຖິ່ນບ້ານວັງປາບໍ່ມີໜ່ວຍສຽງ ຜ-ພ /ph/; ສຽງ ຜ-ພ /ph/ ໃນພະຍັນຊະນະພາສາກາງ ພາສາຖິ່ນບ້ານວັງປາອອກສຽງເປັນ ຖ-ທ /th/.

ຕົວຢ່າງ: ພໍ່ [ phɔ: ]$^{2}$ ພາສາຖິ່ນອອກສຽງ ທໍ່ [ thɔ: ]$^{2}$

ເຜົາ [ phao ]$^{4}$ ພາສາຖິ່ນອອກສຽງ ເຖົາ [ thao ]$^{4}$

**- ເປັນພະຍັນຊະນະທ້າຍພະຍາງໄດ້ທັງໝົດ 8 ຕົວຄື:**

**(1) ກ / k/ ເກົ** : ຕາກ [ ta:k ]$^{6}$, ຈິກເຈ້ຍ [Ci:k ]$^{6}$[Ci:a ]

(2) **ດ / d/ ເດົ** : ຝາດ [Fa:t]5, ໜວດ [Nu:at]$^{6}$

(3) **ບ /b/ ເບົ** : ແຊບ [sɛ:p]$^{5}$, ສຸພາບ (ສຸທາບ) [ su ]$^{4}$[ tha:p ]$^{6}$

(4) **ງ / ŋ/ ເງົ** : ເຜີ້ງ (ເຖີ້ງ) [thə:ŋ]$^{6}$, ແຮງ [ hɛ:ŋ ]$^{3}$

(5) **ຍ / ɲ/ ເຍົ** : ຝ້າຍ [ fa:i ], ຄໍຫອຍ [ khɔ: ] [ hɔ:j]

(6) **ນ / n/ ເນົ** : ຮ້ອນ [ hɔ:n ]$^{5}$, ບິນ [ bin ]$^{2}$

(7) **ມ / m/ ເມົ** : ລ້ອມ [ lɔ:m]$^{5}$, ຢືມ [ jɯ:a ]$^{1}$

(8) **ວ / o/ ເວົ** : ແຂ້ວ [khɛ:o]$^{6}$, ຍາວ [ ɲa:o ]$^{1}$

**+ ໃນພາສາລາວຖິ່ນບ້ານວັງປາ ບໍ່ປາກົດມີໜ່ວຍສຽງພະຍັນຊະນະຄວບເຊັ່ນ**

**ຕົວຢ່າງ:** ແຂວງ [ khwɛ:ŋ ]$^{4}$ ພາສາຖິ່ນອອກສຽງເປັນ ແຂງ [ khɛ:ŋ ]$^{4}$

ແກວ່ງ [ kwɛ:ŋ ]$^{2}$ ພາສາຖິ່ນອອກສຽງເປັນ ແກ່ງ [ kɛ:ŋ ]$^{2}$

## 3.2. ລະບົບສຽງສະຫຼະຂອງພາສາລາວຖິ່ນບ້ານວັງປາ

ພາສາຖິ່ນບ້ານວັງປາ ລວມມີໜ່ວຍສຽງສະຫຼະທັງໝົດ 22 ໜ່ວຍສຽງຄື:

**1) ສະຫຼະເດັ່ງມີ 18 ໜ່ວຍສຽງ ຄື:**

(1) xະ /a/ **:** ກະປອມ [ ka ]$^{1}$[ pɔ:m ]$^{2}$, ປະຕູ [ pa ]$^{1}$[ tu: ]$^{1}$

(2) xາ /a:/ : ປ້າ [ pa: ]$^{5}$, ຍ່າ [ ɲa: ]$^{2}$

(3) xິ /i/ : ກະປິ [ ka ]$^{1}$ [ pi ]$^{1}$ , ກະທິ [ ka ]$^{1}$ [ thi ]$^{3}$

(4) xີ /i:/ : ຂີ້ເຜື້ອ (ຂີ້ເຜ້ຍ) [ khi: ]$^{6}$ [ fi:a ]$^{4}$, ບີແຄ່ງ [ bi: ]$^{1}$ [ khɛ:ŋ ]$^{2}$

(5) xຶ /ɯ/ : ບັນທຶກ [ ban ]$^{1}$ [ thɯk ]$^{8}$, ດຶງເຊືອກ(ດຶງຊຽກ) [ dɯŋ ]$^{1}$ [ si:ak ]$^{5}$

(6) xື /ɯ:/ : ຝ່າມື [ fa: ]$^{2}$ [ mɯ: ]$^{1}$, ຊື້ [ sɯ:]$^{5}$

(7) xຸ /u/ : ສຸພາບ (ສຸຫາບ) [ su ]$^{4}$ [ tha:p ]$^{5}$, ຄຸ [ khu ]$^{3}$

(8) xູ /u:/ : ພູ [thu:]$^{3}$, ນາຍຄູ [ na:i ]$^{3}$[ khu: ]$^{3}$

(9) ເxະ /e/ : ເຕະບານ [ te ]$^{1}$[ ba:n ]$^{1}$, ເກະກະ [ ke ]$^{1}$ [ ka ]$^{1}$

(10) ເx /e:/ : ເພດານ [ phe: ]$^{3}$[ da:n ]$^{1}$, ເທ [ the: ]$^{3}$

(11) ແxະ /ɛ/ : ແກະ[ kɛ ]$^{1}$, ກະແຕະ[ ka ]$^{1}$[ tɛ ]$^{1}$

(12) ແx /ɛ:/ : ແຮງ[ hɛ:ŋ ]$^{3}$, ແລ່ນ[ lɛ:n ]$^{1}$

(13) ເxິ /ə/ : ເປື້ອນເປິ (ປ້ຽນເປິ), [ pi:an ]$^{5}$, ເງິນ [ ŋən ]$^{3}$

(14) ເxີ /ə:/ : ຜັກອີເລີດ (ຖັກອີເລີດ) [ thuk]$^{7}$ [ ʔi ]$^{2}$ [ lə:t ]$^{5}$

(15) ເxາະ /ɔ/ : ນ້ຳເຊາະ [ nam ]$^{5}$[ sɔ ]$^{3}$, ເອາະຫຼາມ [ ʔɔ ]$^{1}$[ la:m ]$^{3}$

(16) xໍ /ɔ:/ : ລໍ້ຝ້າຍ [ lɔ: ]$^{5}$[ fa:I ]$^{6}$, ຄໍຫອຍ [ khɔ: ]$^{3}$[ hɔ:i ]$^{4}$

(17) ໂxະ /o/ : ໂຕະ[ to ]$^{1}$, ຈິໂກະ [ ci ]$^{1}$ [ ko ]$^{1}$

(18) ໂx /o:/ **:** ນິ້ວໂປ້ [ ni:o ]$^{5}$ [ po: ]$^{2}$ ,ໂສ້ [ so: ]$^{6}$

**2) ສະຫຼະປະສົມມີ 4 ສຽງຄື:**

(1) ເxັຍ /ia/: ຕີເຜັຍ ເຜັຍ [ ti: ]$^{1}$ [ phia ]$^{4}$ [ phia ]$^{4}$

(2) ເxຍ /i:a/: ເລຍ[ li:a ]$^{3}$, ເບຍ [ bi:a ]$^{1}$

(3) xົວະ /ua/: ຂີ້ຕົວະ [ khi: ]$^{6}$ [ tua ]$^{1}$, ຂາວຈົວະ [ khao ] [ cua ]

(4) xົວ /u:a/: ຜົວ (ຖົວ) [thu:a]$^{4}$, ຫົວ [ hu:a ]$^{4}$

ເມື່ອທຽບກັບສຽງສະຫຼະພາສາກາງ ເຫັນວ່າພາສາຖິ່ນບ້ານວັງປາບໍ່ມີສະຫຼະປະສົມ 2 ສຽງຄື: ເxືອ /ɯa/, ເxືອ /ɯ:a/. ສຽງສະຫຼະ ເxືອ /ɯa/, ເxືອ /ɯ:a/ ໃນພາສາກາງ ພາສາຖິ່ນບ້ານວັງປາ ອອກເປັນສຽງ ເxັຍ /ia/, ເxຍ /i:a/.

ຕົວຢ່າງ:

| | | |
|---|---|---|
| ເຈືອ [cɯa]$^{1}$ | ພາສາຖິ່ນອອກສຽງ | ເຈັຍ [ Cia ]$^{1}$ |
| ເທືອ [ thɯa ]$^{1}$ | ພາສາຖິ່ນອອກສຽງ | ເທັຍ [ thia ]$^{1}$ |
| ເຫຼືອ [ lɯ:a ]$^{4}$ | ພາສາຖິ່ນອອກສຽງ | ເຫຼຍ [ li:a ]$^{4}$ |
| ເໝືອງ[mɯ:aŋ]$^{4}$ | ພາສາຖິ່ນອອກສຽງ | ໝຽງ [Mi:aŋ]$^{4}$ |

**ສ່ວນສຽງສະຫຼະ 3 ສຽງຄື:**

(1) ໃx, ໄx /aj/ ເກີດຈາກສຽງສະຫຼະ xະ /a/ ປະສົມກັບ ຍ /j/

ພົບວ່າພາສາຖິ່ນບ້ານວັງປາບໍ່ມີສຽງ ໃx ໂດຍອອກເປັນສຽງ ໄx .

**ຕົວຢ່າງ:** ໃຈຮ້າຍ [ cai ]1 [ ha:i ]5 ພາສາຖິ່ນອອກສຽງ ໄຈຮ້າຍ[ cai ]1 [ ha:i ]5

ໃບຕອງ[ bai ]1 [ tɔ:ŋ ]1 ພາສາຖິ່ນອອກສຽງ ໄບຕອງ[ bai ]1 [ tɔ:ŋ ]1

(2) ເxົາ /aw/ ເກີດຈາກສຽງສະຫຼະ xະ /a/ ປະສົມກັບ ວ /w/

ພົບວ່າພາສາຖິ່ນບ້ານວັງປາອອກສຽງເປັນ ເອົາ /aw/ ຄືກັບສຽງສະຫຼະພາສາກາງ

**ຕົວຢ່າງ:** ຜັກເນົ່າ (ຖັກເນົ່າ) [ thak ]7 [ naw ]2

ເປົ່າ [ paw ]2 ພາສາຖິ່ນອອກສຽງ ເປົ່າ [ paw ]2

(3) xໍາ /am/ ເກີດຈາກxສຽງສະຫຼະ xະ /a/ ປະສົມກັບ ມ /m/

ພົບວ່າ ສຽງສະຫຼະພາສາຖິ່ນບ້ານວັງປາອອກສຽງເປັນ ອໍາ /am/

**ຕົວຢ່າງ:** ດໍານາ [ dam ]1[ na: ]3 ພາສາຖິ່ນອອກສຽງ ດໍານາ [ dam ]1[ na: ]3

ຕໍ່າຫູກ[ tam ]2 [ hu:k ]6 ພາສາຖິ່ນອອກສຽງ ຕໍ່າຫູກ[ tam ]2 [ hu:k ]6

## 4. ວິພາກຜົນ

ຈາກຜົນການສຶກສາພົບວ່າ:

- ໜ່ວຍສຽງພະຍັນຊະນະຂອງພາສາຖິ່ນບ້ານວັງປາມີທັງໝົດ 19 ໜ່ວຍສຽງຄື ກ /k/, ຂ-ຄ /kh/, ຫງ-ງ /ŋ/, ຈ /c/, ສ-ຊ /s/, ຫຍ-ຍ /ɲ/, ດ /d/, ຕ /t/, ຖ,ທ /th/, ໜ-ນ /n/, ບ /b/, ປ /p/, ຝ,ຟ /f/, ໝ-ມ /m/, ຍ /j/, ຫຼ-ລ-ຣ /l/, ຫວ-ວ /w/, ອ /ʔ/, ຫ,ຮ /h/ ເຊິ່ງເປັນພະຍັນຊະນະຕົ້ນພະຍາງໄດ້ທັງໝົດ 19 ໜ່ວຍສຽງ ແລະ ໃນນັ້ນເປັນພະຍັນຊະນະທ້າຍພະຍາງ 8 ໜ່ວຍສຽງ. ເມື່ອທຽບກັບໜ່ວຍສຽງພະຍັນຊະນະພາສາກາງແມ່ນບໍ່ມີ 2 ໜ່ວຍສຽງຄື ຜ-ພ /ph/ ພາສາລາວຖິ່ນບ້ານວັງປາອອກເປັນສຽງ ຖ-ທ /th/ ແລະ ພາສາຖິ່ນບ້ານວັງປາບໍ່ມີໜ່ວຍສຽງພະຍັນຊະນະຄວບ “ວ”. ຜົນການສຶກສາໃນປະເດັນນີ້ໄດ້ສອດຄ່ອງກັບຜົນການສຶກສາຂອງ ທອງພັນ ພົມພິບົດ (2012) ໄດ້ສຶກສາສົມທຽບພາສາທ້ອງຖິ່ນແກ່ນທ້າວ ເມືອງແກ່ນທ້າວ ແຂວງໄຊຍະບູລີ ກັບ ພາສາທ້ອງຖິ່ນວຽງຈັນ ໂດຍມີຈຸດປະສົງເພື່ອສຶກສາສົມທຽບພາສາທ້ອງຖິ່ນແກ່ນທ້າວກັບພາສາທ້ອງຖິ່ນວຽງຈັນ. ຜົນການສຶກສາເຫັນວ່າ ຈໍານວນໜ່ວຍສຽງພະຍັນຊະນະ, ສະຫຼະ ແລະ ສຽງວັນນະຍຸດລະ ຫວ່າງທ້ອງຖິ່ນວຽງຈັນກັບທ້ອງຖິ່ນແກ່ນທ້າວແມ່ນບໍ່ເທົ່າກັນ ໜ່ວຍສຽງພະຍັນຊະນະທ້ອງຖິ່ນວຽງຈັນມີ 20 ໜ່ວຍສຽງ, ໜ່ວຍສຽງພະຍັນຊະນະທ້ອງຖິ່ນແກ່ນທ້າວມີ 19 ໜ່ວຍສຽງ.

- ໜ່ວຍສຽງສະຫຼະພາສາຖິ່ນບ້ານວັງປາມີທັງໝົດ 22 ໜ່ວຍສຽງ; ສະຫຼະເຄົ້າ 18 ໜ່ວຍສຽງ ຄື xະ /a/, xາ /a:/, xິ /i/, xີ /i:/, xຶ /ɯ/, xື /ɯ:/, xຸ /u/, xູ /u:/, ເxະ /e/, ເx /e:/, ແxະ /ɛ/, ແx /ɛ:/, ໂxະ /o/, ໂx /o:/, ເxາະ /ɔ/, xໍ /ɔ:/, ເອິ /ə/, ເອີ /ə:/ . ສໍາລັບສຽງສະຫຼະເຄົ້າ ນັ້ນໄດ້ສອດຄ່ອງກັບຜົນການສຶກສາຂອງທອງພັນ ພົມພິບົດ, ແສງຟ້າ ໂຫລານຸພາບ, ເໜືອນຝັນ ພູ່ພັນ ທີ່ລ້ວນແຕ່ໄດ້ສຶກສາກ່ຽວກັບລະບົບສຽງຂອງພາສາລາວ ພົບວ່າມີໜ່ວຍສຽງສະຫຼະເຄົ້າ ຫຼື ສະຫຼະດ່ຽວ ຈໍານວນ 18 ໜ່ວຍສຽງເທົ່າກັນ.

- ສະຫຼະປະສົມພາສາຖິ່ນບ້ານວັງປາມີທັງໝົດ 4 ໜ່ວຍສຽງຄື: ເອັຍ /ia/, ອົວະ /ua/, ເອຍ /i:a/, ອົວ /u:a/ ເມື່ອທຽບກັບສະຫຼະພາສາກາງບໍ່ມີ 2 ໜ່ວຍສຽງ ເxືອ /ɯa/, ເxືອ /ɯ:a/ ພາສາຖິ່ນບ້ານວັງອອກສຽງເປັນສະຫຼະ ເxັຍ /ia/, ເxຍ /i:a/. ສ່ວນສະຫຼະ ໃx, ໄx /aj/, ເxົາ /aw/, xໍາ /am/ ເປັນສຽງປະສົມລະຫວ່າງສະຫຼະປະສົມກັບສຽງພະຍັນຊະນະທ້າຍພະຍາງ (ຕົວສະກົດ) ເຊິ່ງສຽງດັ່ງກ່າວນີ້ພາສາຖິ່ນບ້ານວັງປາ ມີຈໍານວນ 3 ສຽງຄື ໄx /aj/, ເxົາ /aw/, xໍາ /am/ ໂດຍບໍ່ມີສຽງສະຫຼະ ໃx; ພາສາຖິ່ນບ້ານວັງປາອອກສຽງເປັນສະຫຼະ ໄx.

## 5. ສະຫຼຸບ

ຈາກຜົນການສຶກສາພົບວ່າ ໜ່ວຍສຽງພະຍັນຊະນະຂອງພາສາຖິ່ນບ້ານວັງປາມີທັງໝົດ 19 ໜ່ວຍສຽງ ເຊິ່ງເປັນພະຍັນຊະນະຕົ້ນພະຍາງໄດ້ທັງໝົດ 19 ໜ່ວຍສຽງ ແລະ ໃນນັ້ນເປັນພະຍັນຊະນະທ້າຍພະຍາງ 8 ໜ່ວຍສຽງ. ເມື່ອທຽບກັບໜ່ວຍສຽງພະຍັນຊະນະພາສາກາງແມ່ນບໍ່ມີ 2 ໜ່ວຍສຽງຄື ຜ-ພ /ph/ ພາສາລາວຖິ່ນບ້ານວັງປາອອກເປັນ

ສຽງ ຖ-ທ /th/ ແລະ ພາສາຖິ່ນບ້ານວັງປາບໍ່ມີໜ່ວຍສຽງພະຍັນຊະນະຄວບ “ວ”. ໜ່ວຍສຽງສະຫຼະພາສາຖິ່ນບ້ານວັງປາມີທັງໝົດ 22 ໜ່ວຍສຽງ ສະຫຼະເຄົ້າ 18 ໜ່ວຍສຽງ ແລະ ສະຫຼະປະສົມ 4 ໜ່ວຍສຽງ; ເມື່ອທຽບກັບສະຫຼະພາສາກາງບໍ່ມີ 2 ໜ່ວຍສຽງ ເx◌ືອ /ɯa/, ເx◌ືອ /ɯːa/ ພາສາຖິ່ນບ້ານວັງອອກສຽງເປັນສະຫຼະ ເx◌ັຍ /ia/, ເxຍ /i:a/. ສ່ວນສະຫຼະ ໃx, ໄx /aj/, ເx◌ົາ /aw/, x◌ໍາ /am/ ເປັນສຽງປະສົມລະຫວ່າງສະຫຼະປະສົມກັບສຽງພະຍັນຊະນະທ້າຍພະຍາງ (ຕົວສະກົດ) ເຊິ່ງສຽງດັ່ງກ່າວນີ້ພາສາຖິ່ນບ້ານວັງປາ ມີຈຳນວນ 3 ສຽງ ຄື ໄx /aj/, ເx◌ົາ /aw/, x◌ໍາ /am/ ໂດຍບໍ່ມີສຽງສະຫຼະ ໃx; ພາສາຖິ່ນບ້ານວັງປາອອກສຽງເປັນສະຫຼະ ໄx ເຊິ່ງຜົນການສຶກສາໃນຄັ້ງນີ້ເຫັນວ່າສ່ວນຫຼາຍແລ້ວແມ່ນສອດຄ່ອງກັບຜົນການຄົ້ນຄວ້າຂອງບັນດານັກວິຊາການທີ່ໄດ້ທຳການຄົ້ນຄວ້າຜ່ານມາ ເຊິ່ງມີບາງປະເດັນທີ່ມີຄວາມແຕກຕ່າງ ເຊັ່ນ ຈຳນວນໜ່ວຍສຽງພະຍັນຊະນະ, ໜ່ວຍສຽງສະຫຼະ ທີ່ແຕກຕ່າງກັນພຽງແຕ່ 1-2 ໜ່ວຍສຽງເທົ່ານັ້ນ.

## 6. ຂໍ້ຄັດແຍ້ງ

ພວກຂ້າພະເຈົ້າຄະນະນັກຄົ້ນຄວ້າຂໍປະຕິຍານຕົນວ່າ ຂໍ້ມູນທັງໝົດທີ່ມີໃນບົດຄວາມວິຊາການດັ່ງກ່າວນີ້ແມ່ນບໍ່ມີຜົນປະໂຫຍດແອບແຝງໃດໆກັບອົງກອນ ຫຼື ສັງຄົມ.

## 7. ເອກະສານອ້າງອີງ


ແສງຟ້າ ໂຫລານຸພາບ. (2019). ວາລະສານລາວ. ພາກວິຊາພາສາລາວ-ວັດທະນະທຳລາວ.

ທອງພັນ ພົມພິບົດ. (2012). ບົດຈົບຊັ້ນປະລິນຍາໂທ. ມະວິທະຍາໄລແຫ່ງຊາດ.

ນົງລັກ ສູງສູມານ. (2020). ບົດງານວິໄຈ ສຶກສາລະບົບສຽງພາສາໄທກັບແກ້ ເມືອງຄຳເກີດ ແຂວງບໍລິຄຳໄຊ. ປຶ້ມວາລະສານວິຊາການ ອັກສອນສາດລາວ.

ນົງລັກ ສູງສູມານ. (2019). ບົດງານວິໄຈ ສຶກສາລະບົບສຽງພາສາໄທຄັງ ເມືອງວຽງທອງ ແຂວງບໍລິຄຳໄຊ. ປຶ້ມວາລະສານວິຊາການ ອັກສອນສາດລາວ

ບຸນມີ ກົງມະນີ, ບຸນເລີດ ແສງສຸລິນ, ດວງຕາ ມະນີວົງ, ສົມບູນ ສີຫາລາດ, ແລະ ອ່ອນແກ້ວ ນວນນະວົງ. (2008). ປຶ້ມແບບຮຽນພາສາລາວ. ຊັ້ນມັດທະຍົມປີທີ 5. ວຽງຈັນ: ກະຊວງສຶກສາທິການ. ສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ.

ພົມໂພ ຫລວງລາດ, ວິຈິດ ລໍາໄຊ, ມະໄລຄໍາ ໄຊຍະກອນ, ຊະອະລິດ ແສງຊາດ, ແລະ ສຸລິວັນ ຫຼ້າໜໍ່ສະຫວັນ. (2016). ປຶ້ມທັກສະການຄົ້ນຄວ້າ. ວຽງຈັນ: ກະຊວງສຶກສາທິການ ແລະ ກິລາ.

ອ່ອນແກ້ວ ນວນນະວົງ. (2000). ປຶ້ມໄວຍາກອນລາວປັດຈຸບັນ ກະຊວງສຶກສາທິການ ສະຖາບັນຄົ້ນຄວ້າວິທະຍາສາດການສຶກສາແຫ່ງຊາດ.

ອ່ອນແກ້ວ ນວນນະວົງ. (2020). ປຶ້ມໄວຍາກອນລາວປັດຈຸບັນ ພາກອັກຂະຫຼະວິທີ. ກະຊວງສຶກສາທິການ ແລະ ກິລາ ສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ.

ການຈະນາ ນາກສະກຸນ. (1997). ລະບົບສຽງພາສາໄທ. ບາງກອກ: ມະຫາວິທະຍາໄລຈຸລາລົງກອນ.

ກຳໄຊ ທອງຫຼໍ່. (1994). ຫຼັກການພາສາໄທ. ບາງກອກ:

ສົມຊົງ ບູລຸດພັດ. (2543) ພູມີສາດພາສາຖິ່ນ ສະຖາບັນວິໄຈພາສາ ແລະ ວັດທະນະທຳເພື່ອພັດທະນາຊົນນະບົດ ມະຫາວິທະຍາໄລ ມະຫິດົນ

ປຣີຊາ ທິຊິນພົງ. (1979). ລັກສະນະຂອງພາສາໄທ. ບາງກອກ:

ເລືອງເດດ ປັນເຊື່ອນຂັດ. (1988). ປຶ້ມພາສາຖິ່ນຕະກຸນໄຕ. ສະຖາບັນຄົ້ນຄວ້າພາສາ. ແລະ ວັດທະນະທຳໃນການພັດທະນາຊົນນະບົດ